

# ການເປັນພະຍານໃຫ້ພຣະອົງ

ບົດຮຽນທີ 12 ສຳລັບສະບາໂຕທີ 20 ມິຖຸນາ, 2026

“‘ອົງພຣະຜູ້ເປັນເຈົ້າ ພຣະ
ເຈົ້າພຣະອົງໄດ້ສັ່ງສອນສິ່ງ
ທີ່ຂ້ອຍຈະເວົ້າ ເພື່ອວ່າ
ຂ້ອຍຈະໄດ້ຊ່ວຍຜູ້ທີ່ອ່ອນ
ແຮງ ໃຫ້ພວກເຂົາ
ເຂັ້ມແຂງ ແລະ ມີແຮງ
ຂຶ້ນໃໝ່. ທຸກໆເຊົ້າພຣະອົງ
ໄດ້ໃຫ້ຂ້ອຍຫິວກະຫາຍ
ຟັງສິ່ງທີ່ພຣະອົງກຳລັງ
ສັ່ງສອນຂ້ອຍ”

(ອຊຍ 50:4)



ຄົນນັບພັນບໍ່ຮູ້ຈັກກັບພຣະເຢຊູ. ພວກເຮົາເອີ້ນພວກເຂົາວ່າ ເປັນ "ລູກແກະທີ່ເສຍ," ແຕ່ພວກເຂົາບໍ່ຮູ້ວ່າພວກເຂົາກຳລັງເສຍ, ແລ້ວພວກເຂົາຈະຮູ້ໄດ້ແນວໃດຖ້າບໍ່ມີໃຜອະທິບາຍໃຫ້ພວກເຂົາຟັງ?

ພຣະເຈົ້າຊົງຫ່ວງໄຍທຸກຄົນໃນໂລກໜ່ວຍນີ້ "ພຣະອົງຊົງມີພຣະປະສົງໃຫ້ທຸກຄົນໄດ້ເຖິງຄວາມພົ້ນ ແລະ ໃຫ້ມາຮູ້ຈັກຄວາມຈິງ" (1 ຕມທ 2:4 ). ເຊິ່ງລວມເຖິງຜູ້ທີ່ຮູ້ຈັກ ແລະ ຍັງບໍ່ທັນຮູ້ຈັກກັບພຣະອົງເທື່ອ, ແລະຜູ້ທີ່ຮູ້ແລ້ວ ແຕ່ຫັນຫລັງໃຫ້ກັບພຣະອົງ.

ແລ້ວພຣະເຈົ້າຈະຊົງເຂົ້າເຖິງຄົນທັງໝົດນັ້ນໄດ້ແນວໃດ? ຜ່ານໂຕພວກເຮົານີ້ລະ "ຄຳສັ່ງທີ່ຍິ່ງໃຫຍ່."







**ພວກເຮົາຈະແບ່ງປັນຫຍັງ?**

- ຄຳສັ່ງທີ່ຍິ່ງໃຫຍ່

**ພວກເຮົາຈະແບ່ງປັນໄດ້ແນວໃດ?**

- ຮຽນແບບພຣະເຢຊູ
- ເຊື່ອມດ້ວຍສາຍສຳພັນ

**ຈະນຳຜູ້ທີ່ຫລົງຫາຍກັບມາໄດ້ແນວໃດ?**

- ພຣະເຈົ້າຊົງສະແຫວງຫາລູກຂອງພຣະອົງ
- ພວກເຮົາກຳລັງຊອກຫາຜູ້ທີ່ຫລົງຫາຍ

# ພວກເຮົາຈະແບ່ງປັນຫຍັງ?

# ຄຳສັ່ງທີ່ຍິ່ງໃຫຍ່

"ເຫດສະນັ້ນພວກເຈົ້າຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ພວກເຂົາຮັບບັບຕິສະມາ ໃນພຣະນາມແຫ່ງພຣະບິດາ, ພຣະບຸດ ແລະ ພຣະວິນຍານບໍຣິສຸດເຈົ້າ" (ມທ 28:19)



"ຈົ່ງອອກໄປ...ຫາທຸກຊົນຊາດ" ແມ່ນຂໍ້ຄຳສັ່ງທີ່ພຣະເຢຊູຊົງມອບໃຫ້ຜູ້ຄົນທີ່ມາລວມກັນເພື່ອເບິ່ງພຣະອົງ ຫລັງຈາກການຟື້ນພຣະຊົນ (ມທ. 28:18-19a).



ພວກເຂົາເຮັດຫຍັງ? ພວກເຂົາຕ້ອງໄປ ແລະສ້າງສາວົກ. ເຊິ່ງແມ່ນການຕິດຕໍ່ກັບຜູ້ຄົນ, ຮັບບັບຕິສະມາໃຫ້ພວກເຂົາ, ແລະ ສັ່ງສອນພວກເຂົາໃຫ້ເປັນສາວົກຂອງພຣະອົງ (ມທ 28:19-20).



ສາວົກເຫລົ່ານັ້ນ, ຕ້ອງໄດ້ສັ່ງສອນຄົນລຸ້ນຕໍ່ໆໄປ... ແລະເປັນແບບນີ້ເລື້ອຍມາຕະຫລອດ 2000 ປີ... ຈົນເຖິງຍຸກຂອງພວກເຮົາມື້ນີ້, ແລະ ພວກເຮົາກໍ່ຄືໜຶ່ງໃນຜູ້ທີ່ໄດ້ຮັບຄຳສັ່ງຂອງພຣະເຢຊູ.

ເຊັ່ນດຽວກັບເປໂຕ ແລະ ໂຢຮັນ, "ພວກເຮົາບໍ່ອາດເວົ້າເຖິງສິ່ງທີ່ພວກເຮົາບໍ່ໄດ້ຍິນ ແລະ ໄດ້ເຫັນ" (ກຈກ 4:20). ພວກເຮົາເວົ້າໄດ້ຈາກເວທີແບ່ງປັນທີ່ຖະໜົນ, ແບ່ງປັນຄຳພະຍານຜ່ານສື່ມີເດຍ, ຫລືພຽງແຕ່ແບ່ງປັນໃຫ້ກັບໃຜຈັກຄົນ.



# ພວກເຮົາຈະແບ່ງປັນໄດ້ແນວໃດ?

# ຮຽນແບບຈາກພຣະເຢຊູ

“ເພາະວ່າຄວາມຮັກຂອງອົງພຣະຄຣິດຊົງບັງຄັບພວກເຮົາຢູ່ ຍ້ອນພວກເຮົາແນ່ໃຈວ່າ, ມີຜູ້ໜຶ່ງໄດ້ຕາຍແທນຄົນທັງປວງ, ດັ່ງນັ້ນ ຄົນທັງປວງຈຶ່ງໄດ້ເຂົ້າສ່ວນໃນຄວາມຕາຍນັ້ນ” (2 ກຣທ 5:14)

ແມ່ນຫຍັງເປັນແຮງຈູງໃຈໃຫ້ພຣະເຢຊູ ສະແຫວງຫາ “ແກະທີ່ເສຍໄປ” (ມທ. 15:24)?

ບໍ່ຕ້ອງສົງໄສເລີຍ, ມັນແມ່ນຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາ (ມທ 9:36; ອຟຊ. 5;2). ພຣະອົງໄດ້ເອົາຄວາມຮັກຂອງພຣະອົງໄວ້ໃນໂຕຂອງພວກເຮົາເຊັ່ນກັນ, ເພື່ອທີ່ພວກເຮົາຈະໄດ້ແບ່ງປັນຄວາມຮັກນີ້ໃຫ້ກັບຜູ້ຄົນອ້ອມຂ້າງພວກເຮົາ. ບາງຄັ້ງ, ຜູ້ຄົນໄດ້ບັງຄັບໃຫ້ຄົນມາຮັບເອົາພຣະເຢຊູເພື່ອຜົນປະໂຫຍດສ່ວນໂຕ. ແຕ່ນັ້ນບໍ່ແມ່ນວິທີທີ່ພຣະເຢຊູໃຊ້







ພຣະເຈົ້າບໍ່ໄດ້ບັງຄັບໃຫ້ອາດາມ ແລະ ເອວາບໍ່ໃຫ້ເຮັດບາບ. ພຣະອົງບໍ່ໄດ້ບັງຄັບຊາວບ້ານໃຫ້ເຂົ້າໄປໃນເຮືອ. ພຣະອົງບໍ່ໄດ້ບັງຄັບຊາວເມືອງນີເນເວໃຫ້ຍອມຮັບພຣະອົງ. ພຣະອົງກ່າວດ້ວຍຄວາມຮັກ ແລະ ຊົງເຕືອນເຖິງຜົນຈະຕາມມາຂອງຕົວເລືອກຂອງພວກເຂົາຖ້າເລືອກເຮັດບາບ.

ໂດຍການຮຽນແບບຈາກພຣະເຢຊູ, ພວກເຮົາໄດ້ສະແດງຄວາມຮັກຂອງພຣະອົງຕໍ່ຄົນອື່ນ, ແລະ ເຊີນພວກເຂົາໃຫ້ຕິດຕາມພຣະອົງ.

# ເຊື່ອມດ້ວຍສາຍສຳພັນ

"…ແຕ່ໃນໃຈຂອງເຈົ້າທັງຫລາຍ ຈົ່ງເຄົາຣົບນັບຖືພຣະຄຣິດວ່າເປັນອົງພຣະຜູ້ເປັນເຈົ້າ ຈົ່ງມີໃຈພ້ອມຢູ່ສະເໝີ ເພື່ອພວກເຈົ້າຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກເຈົ້າວ່າ, ເຈົ້າມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້." (1 ປຕ 3:15)

ພວກເຮົາທັງໝົດແມ່ນຜູ້ແບ່ງປັນພຣະຄຳຂອງພຣະເຈົ້າ ແລະ ກໍໄດ້ຮັບມອບໝາຍໃຫ້ເຮັດຕາມຄຳສັ່ງຂອງພຣະອົງ (1 ປຕ 3:15). ແຕ່ວ່າບໍ່ແມ່ນທັງໝົດໃນພວກເຮົາຮູ້ຈັກວິທີແບ່ງປັນ. ຢ່າງໃດກໍ່ຕາມ ພວກເຮົາກໍ່ມີຄຳສັນຍາວ່າ ພຣະເຈົ້າຈະປະທານຖ້ອຍຄຳທີ່ຈຳເປັນໃຫ້ແກ່ພວກເຮົາ (ອຊຢ 50:4).





ນີ້ແມ່ນເຄັດລັບງ່າຍໆບາງປະການ ທີ່ຄວນຄຳນຶງເຖິງການແບ່ງປັນພຣະເຢຊູໃຫ້ກັບຄົນອື່ນ:



ທຳຄວາມຮູ້ຈັກກັບໃຜບາງຄົນ ແລະ ສ້າງມິດຕະພາບໄປເລື້ອຍໆ



ອະທິຖານຂໍໃຫ້ພຣະວິນຍານບໍຣິສຸດ ຊົງເຮັດວຽກໃນຫົວໃຈຂອງບຸກຄົນນັ້ນ, ອະທິຖານຂໍໂອກາດທີ່ເໝາະສົມໃນການໂອ້ລົມກັບພວກເຂົາ



ຊອກຫາໂອກາດທີ່ຈະເວົ້າເຖິງປະສົບການຄວາມເຊື່ອຂອງທ່ານເອງ



ຊອກຫາວິທີທີ່ຈະເຊື່ອມໂຍງເພື່ອນໃໝ່ຂອງພວກເຮົາກັບຄົນອື່ນໆໃນຄຣິດຕະຈັກ



ອະທິຖານກ່ຽວກັບຄວາມຕ້ອງການຫລືຄຳຖາມສະເພາະທີ່ເພື່ອນໃໝ່ຂອງພວກເຮົາອາດມີ



ຊອກຫາໂອກາດທີ່ຈະສະແດງໃຫ້ພວກເຂົາເຫັນວ່າ ພຣະຄຳພີໃຫ້ຄຳປອບໃຈ, ຄຳແນະນຳ ແລະ ແນວທາງໃນຊີວິດຂອງພວກເຮົາແບບໃດ



ຈະມີຊ່ວງເວລາໜຶ່ງທີ່ທ່ານອາດຈະຖາມເພື່ອຂອງທ່ານວ່າ ຢາກສຶກສາພຣະຄຳພີກັບທ່ານຫລືບໍ່?

# ຈະນຳຜູ້ທີ່ຫລົງຫາຍກັບມາ ໄດ້ແນວໃດ?

# ພຣະເຈົ້າຊົງສະແຫວງຫາຜູ້ເປັນລູກຂອງພຣະອົງ

"ອິດສະຣາເອນເອີຍ ເຈົ້າຄືລູກທີ່ຮັກຂອງເຮົາ ເປັນເດັກນ້ອຍທີ່ເຮົາຮັກແພງຫລາຍແທ້ໆ. ເມື່ອເຮົາເອີ່ຍເຖິງເຈົ້າຄືເອີ່ຍເຖິງຊື່ເຈົ້າຍາມໃດ ເຮົາກໍມີຄວາມຮັກ ແລະ ຄິດເຖິງເຈົ້າຍາມນັ້ນ (ຢຣມຢ 31:20 )



ມາຮອດຈຸດໜຶ່ງ ປະຊາກອນຂອງພຣະເຈົ້າໄດ້ແຕກແຍກກັນ: ເອຟຣາອິມ Ephraim (ອານາຈັກທາງເໜືອ) ໄດ້ລະຖິ້ມພຣະເຈົ້າ; ສ່ວນຢູດາ (ອານາຈັກທາງໃຕ້) ຍັງຄົງຊື່ສັດ.

ເຖິງວ່າຈະລະຖິ້ມພຣະເຈົ້າໄປແລ້ວ, ພຣະອົງກໍ່ຍັງຄົງໄດ້ບັນລະຍາຍເຖິງເອຟີມໃນຖານະລູກທີ່ຮັກ (ຢຣມຢ 31:20). ພຣະອົງຊົງກ່າວເຖິງຣາເຊນ ຜູ້ເປັນຍ່າຂອງເອຟຣາອິມວ່າກຳລັງຮ້ອງໄຫ້ຄ່ຳຄວນເຖິງລູກຊາຍທີ່ຕາຍໄປໃນຄວາມບາບຂອງພວກເຂົາ (ຢຣມຢ 31:15).



ຜູ້ທີ່ຮັບໃຊ້ພຣະເຈົ້າ ແລ້ວປະຖິ້ມພຣະອົງ, ພຣະອົງກໍ່ຍັງຊົງຮຽກເອີ້ນເອົາພວກເຂົາດ້ວຍຄວາມຮັກ. ພວກເຂົາແມ່ນບຸດຂອງພຣະອົງ, ແລະ ພຣະອົງຊົງຮັກພວກເຂົາ ແລະ ຊົງກະຕຸ້ນໃຫ້ພວກເຂົາກັບມາຫາພຣະອົງຢ່າງຕໍ່ເນື່ອງ



ບາງເທື່ອໃຜບາງຄົນໃນລູກຂອງພວກເຮົານັ້ນ, ທີ່ຄັ້ງໜຶ່ງມີຄວາມເຊື່ອ, ແລະ ໄດ້ຖິ້ມຄວາມເຊື່ອນັ້ນ. ແຕ່ພວກເຮົາຄວນຈະຮັກພວກເຂົາ ແທນທີ່ພວກເຮົາຈະລະເລີຍພວກເຂົາ, ພຣະເຈົ້າຊົງເຕືອນພວກເຮົາວ່າພວກເຂົາເປັນຜູ້ທີ່ພຣະອົງຊົງເມດຕາກະລຸນາທີ່ສຸດ, ແລະ ພຣະອົງຊົງປາຖະໜາຢ່າງຍິ່ງໃຫ້ພວກເຂົາກັບມາ

# ພວກເຮົາກຳລັງຊອກຫາຜູ້ທີ່ຫລົງຫາຍ

"ເຖິງແມ່ນເຮົາໄດ້ກະຈັດກະຈາຍພວກເຂົາໄປກໍຕາມ ໃນທ່າມກາງບັນດາຊົນຊາດທັງຫລາຍນັ້ນ ແຕ່ຈາກທີ່ຫ່າງໄກພຸ້ນ ພວກເຂົາຍັງຈະລະນຶກຄິດເຖິງແລະຈົດຈຳເຮົາໄດ້ຢູ່" (ຊາກຣຢ 10:9 )





ຄູ່ສົມຣົດຂອງພວກເຮົາ; ລູກຊາຍ; ລູກສາວ; ໝູ່ເພື່ອນ; ເພື່ອນບ້ານ; ພີ່ນ້ອງຜູ້ທີ່ເຄີຍນັ່ງຢູ່ໃນຕັ່ງນັ້ນ... ທີ່ຄັ້ງໜຶ່ງເຄີຍນັ່ງຢູ່ກັບພວກເຮົາ, ຕອນນີ້ພວກເຂົາໄປໃສແລ້ວ?

ມີຫລາຍເຫດຜົນທີ່ຜູ້ຄົນໄດ້ອອກຈາກຄຣິດຕະຈັກ. ພວກເຮົາບໍ່ໄດ້ຖືກເອີ້ນໃຫ້ຕັດສິນພວກເຂົາ, ຕຳນິເຫດຜົນ, ຫລືລືມໄລພວກເຂົາ.

ໜ້າທີ່ຂອງພວກເຮົາແມ່ນອອກໄປຕາມຫາ ແລະ ນຳພວກເຂົາກັບຄືນມາສູ່ພຣະເຢຊູ ແລະ ຄຣິດຕະຈັກ. ແລ້ວພວກເຮົາຈະເຮັດແບບນີ້ໄດ້ແນວໃດ? ທຳອິດ ອະທິຖານ. ຕໍ່ມາ ເປັນແບບຢ່າງທີ່ດີໃນເລື່ອງຄວາມຮັກ ແລະ ຄວາມເມດຕາ.

ຄຳພະຍານຂອງພວກເຮົາ, ການກະທຳ, ຄຳເວົ້າ ແລະ ການອະທິຖານ ສຳລັບຄົນທີ່ຫລົງຫາຍຈາກພຣະເຈົ້ານັ້ນ ສາມາດປ່ຽນແປງຊີວິດ ແລະ ອະນາຄົດຂອງພວກເຂົາໄດ້



“ພຣະເຈົ້າອາດຈະຊົງມອບໝາຍຂ່າວປະເສີດ ແລະ ພັນທະກິດແຫ່ງຄວາມຮັກທັງໝົດໄວ້ກັບບັນດາທູດສະຫວັນກໍເປັນໄດ້. ພຣະອົງອາດຈະຊົງເລືອກໃຊ້ວິທີການອື່ນໆ ເພື່ອໃຫ້ພຣະປະສົງຂອງພຣະອົງສຳເລັດ. ແຕ່ດ້ວຍຄວາມຮັກອັນເປັນອະນັນຂອງພຣະອົງ, ພຣະອົງຊົງເລືອກທີ່ຈະໃຫ້ພວກເຮົາເຂົ້າມາມີສ່ວນຮ່ວມເປັນເພື່ອນຮ່ວມງານກັບພຣະອົງ, ຮ່ວມກັບພຣະຄຣິດ ແລະ ເຫຼົ່າທູດສະຫວັນ ເພື່ອໃຫ້ພວກເຮົາໄດ້ມີສ່ວນຮ່ວມໃນພຣະພອນ, ຄວາມຍິນດີ, ແລະ ການຍົກລະດັບຝ່າຍຈິດວິນຍານ ເຊິ່ງເປັນຜົນມາຈາກພັນທະກິດການຮັບໃຊ້ທີ່ບໍ່ເຫັນແກ່ຕົວນີ້. [...]

ຖ້າຫາກທ່ານອອກໄປເຮັດວຽກງານຕາມທີ່ພຣະຄຣິດຊົງຕັ້ງພຣະໄທໄວ້ໃຫ້ເຫຼົ່າສາວົກຂອງພຣະອົງດຳເນີນງານ ເພື່ອຊ່ວຍນຳພາຈິດວິນຍານມາສູ່ພຣະອົງ, ທ່ານຈະຮູ້ສຶກເຖິງຄວາມຕ້ອງການປະສົບການທີ່ຍັງຮາກເລິກຂຶ້ນ ແລະ ຄວາມຮູ້ທີ່ມາກວ່າເກົ່າໃນສິ່ງຝ່າຍສະຫວັນ, ຕະຫຼອດຮອດຈະມີຄວາມຫິວກະຫາຍໃນຄວາມຊອບທຳ. ທ່ານຈະອ້ອນວອນຕໍ່ພຣະເຈົ້າ, ແລ້ວຄວາມເຊື່ອຂອງທ່ານຈະໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງຂຶ້ນ, ແລະ ຈິດວິນຍານຂອງທ່ານຈະໄດ້ດື່ມດ່ຳຢ່າງເລິກເຊິ່ງຍິ່ງຂຶ້ນຈາກນ້ຳພຸແຫ່ງຄວາມລອດ. ການຜະເຊີນກັບການຕໍ່ຕ້ານ ແລະ ສິ່ງທົດລອງຕ່າງໆ ຈະຂັບເຄື່ອນໃຫ້ທ່ານເຂົ້າຫາພຣະຄຳພີ ແລະ ການອະທິດຖານຫຼາຍຂຶ້ນ. ທ່ານຈະເຕີບໂຕຂຶ້ນໃນພຣະຄຸນ ແລະ ຄວາມຮູ້ໃນພຣະຄຣິດ, ຕະຫຼອດຮອດຈະໄດ້ພັດທະນາປະສົບການອັນອຸດົມສົມບູນ.”.

.

EGW (The Way to Christ, pp. 79-80)